# ວັກຊີນໂຄວິດ-19: ສິ່ງທີ່ໄວລຸ້ນຄວນຈະຮູ້

## ສໍາເນົາຂໍ້ມູນ

ລໍຄອຍການກັບຄືນໄປເຂົ້າໂຮງຮຽນແມ່ນບໍ? ບໍ່ມີການຫຼິ້ນກິລາ ຫຼື ຢຸດກິດຈະການອື່ນໆເນື່ອງຈາກການກັກຕົວແມ່ນບໍ? ສາມາດພົບປະສ້າງສັນກັບຄອບຄົວ ແລະ ໝູ່ເພື່ອນແມ່ນບໍ່? ວັກຊີນໂຄວິດ-19 ແມ່ນທິດທາງຂອງພວກເຮົາ ທີ່ຈະກັບຄືນໄປສູ່ສິ່ງເຫຼົ່ານີ້.

ເປັນສິ່ງປົກກະຕິສໍາລັບຄົນໄວໜຸ່ມ ຫຼື ພໍ່ແມ່ຂອງພວກເຂົາໃນການສອບຖາມກ່ອນທີ່ຈະຮັບຢາວັກຊີນ. ຖ້າທ່ານມີຄໍາຖາມ, ໃຫ້ຖາມທ່ານໝໍ. ນີ້ແມ່ນຄວາມຈິງທີ່ເລັ່ງດ່ວນ:

- ວັກຊີນໂຄວິດ-19 ແມ່ນປອດໄພ.
- ຄືກັນກັບຜູ້ໃຫຍ່, ພວກເຂົາໄດ້ສຶກສາໃນໄວລຸ້ນ, ຊຶ່ງພວກເຮົາຮູ້ວ່າພວກມັນມີປະສິດທິພາບ ແລະ ປອດໄພ
- ວັກຊີນໂຄວິດ-19 ແມ່ນຟຣີ ແລະ ທ່ານບໍ່ຈໍາເປັນຕ້ອງແຈ້ງບັດປະຈໍາຕົວ.
- ວັກຊີນໂຄວິດ-19 ບໍ່ໄດ້ເຮັດໃຫ້ມີລູກຍາກ.

ບໍ່ມີໃຜມັກການສັກຢາ, ແຕ່ມັນເປັນສິ່ງທີ່ຊ່ວຍໃຫ້ທ່ານຮູ້ສຶກສະບາຍ!

- ຟັງດົນຕີທີ່ທ່ານມັກດ້ວຍຫູຟັງ.
- ຜ່ອນຄາຍ, ຫາຍໃຈເລິກໆ.
- ສົບຕາກັບຜູ້ທີ່ໃຫ້ການຊ່ວຍເຫຼືອແກ່ທ່ານ.
- ຈ້ອງເບິ່ງສິ່ງຂອງຢູ່ໃນຫ້ອງ, ເຊັ່ນ ພະຍາຍາມອ່ານຮູບພາບໂປສເຕີທີ່ມີຕົວໜັງສືນ້ອຍໆ.
- ເຮັດໃຫ້ຕົວເອງບໍ່ມີສະມາທິ, ພະຍາຍາມດິດຫົວໂປ້ຕີນໂຕເອງ.

ທ່ານອາດຈະບໍ່ຮູ້ສຶກສະບາຍປານໃດ ເປັນເວລາໜຶ່ງ ມື້ ຫຼັງຈາກທີ່ໄດ້ຮັບການສັກຢາວັກຊີນ, ແຕ່ອາການດັ່ງກ່າວແມ່ນເປັນແບບເບົາບາງ. ແລະ, ມັນດີກວ່າຫຼາຍ ຖ້າຫຼຸບກັບການບໍ່ໄດ້ເຂົ້າໂຮງຮຽນ ຫຼື ເຮັດກິດຈະກໍາອື່ນໆເປັນເວລາຫຼາຍມື້ ຫຼື ເປັນອາທິດເນື່ອງຈາກວ່າ ທ່ານເຈັບປ່ວຍຍ້ອນ ໂຄວິດ-19 ຫຼື ຕ້ອງໄດ້ກັກຕົວ ຖ້າວ່າທ່ານໄດ້ໃກ້ຊິດກັບຄົນທີ່ເປັນໂຄວິດ-19.

ຈົ່ງຈື່ໄວ້ວ່າ, ການໄດ້ຮັບອະນຸຍາດຈາກພໍ່ແມ່ ຫຼື ຜູ້ປົກຄອງແມ່ນຈໍາເປັນຫຼາຍສໍາລັບການຮັບຢາວັກຊີ ຖ້າທ່ານອາຍຸຕໍ່າກວ່າ 18 ປີ. ຖ້າພໍ່ແມ່ ຫຼື ຜູ້ປົກຄອງຂອງທ່ານບໍ່ສາມາດໄປກັບທ່ານໄດ້, ຈົ່ງໂທຫາຄຣີນິກ ແລະ ສອບຖາມກ່ຽວກັບຂັ້ນຕອນເອກະສານຍິນຍອມຂອງພວກເຂົາ.

ມີຫຼາຍສະຖານທີ່ທີ່ໃຫ້ການສັກຢາວັກຊີນໂຄວິດ-19. ບໍ່ແມ່ນທຸກວັກຊີນໂຄວິດ-19 ຈະສາມາດໃຫ້ກັບຄົນທີ່ອາຍຸຕໍ່າກວ່າ 18 ປີໄດ້, ດັ່ງນັ້ນ ຈົ່ງກວດເບິ່ງເພື່ອໃຫ້ແນ່ໃຈວ່າສະຖານທີ່ທີ່ທ່ານຈະໄປນັ້ນມີວັກຊີນທີ່ທ່ານສາມາດສັກໄດ້ຫຼືບໍ່. ທ່ານສາມາດຄົ້ນຫາສະຖານທີ່ທີ່ໃກ້ກັບທ່ານ ແລະ ຊອກຫາໂດຍການພິມຊະນິດຂອງວັກຊີນທີ່ www.vaccines.gov.

Minnesota Department of Health
Communications Office
PO Box 64975
Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

8/11/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989.*